ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

ເລກທີ :..516../ພກພ

ນະຄອນຫຼວງວຽງຈັນ, ວັນທີ: 18 MAY 2020

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນ ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019

- ອີງຕາມມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ 3/2020 ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ສະບັບ ເລກທີ: 507, ລົງວັນທີ: 04 ພຶດສະພາ 2020.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດຮຽນເຊີນທ່ານຜູ້ຖືຮຸ້ນຂອງບໍລິສັດເຂົ້າຮ່ວມກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2019 ທີ່ຈະໄດ້ຈັດຂຶ້ນໃນວັນທີ 29 ພຶດສະພາ 2020 ເວລາ 14:30 ໂມງ (ເລີ່ມລົງທະບຽນ ເວລາ 13:00 ໂມງ). ທີ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງ ວຽງຈັນ, ສປປ ລາວ. ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ເນື່ອງຈາກສະພາບການລະບາດຂອງພະຍາດ COVID-19 ດັ່ງນັ້ນ, ເພື່ອເປັນການປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດ ດັ່ງກ່າວ ພ້ອມທັງເປັນການສ້າງຄວາມໝັ້ນໃຈໃຫ້ແກ່ຜູ້ເຂົ້າຮ່ວມປະຊຸມ. ບໍລິສັດຈະຕັ້ງຈຸດຄັດກອງ ແລະ ປະຕິບັດໄລຍະຫ່າງທາງ ສັງຄົມ. ບໍລິສັດຂໍຄວາມຮ່ວມມືຜູ້ຖືຮຸ້ນມອບສິດ (ພ້ອມທັງຄັດຕິດຄຳຖາມລ່ວງໜ້າ) ໃຫ້ສະມາຊິກອິດສະຫຼະຂອງບໍລິສັດ ເຂົ້າຮ່ວມ ປະຊຸມ, ລົງຄະແນນສຽງ ແລະ ຖາມຄຳຖາມແທນໃນກໍລະນີຜູ້ຖືຮຸ້ນ ຫຼື ຜູ້ຮັບມອບສິດມີໄຂ້ສູງ 37.5 °C ຫຼື ມີອາການກ່ຽວກັບ ລະບົບທາງເດີນຫາຍໃຈ. ພ້ອມທັງ ຂໍຄວາມຮ່ວມມືຜູ້ທີ່ຈະເຂົ້າຮ່ວມກອງປະຊຸມໃສ່ຜ້າອັດປາກ-ດັງ ຕະຫຼອດເວລາທີ່ເຂົ້າຮ່ວມກອງ ປະຊຸມ.

ຜູ້ຖືຮຸ້ນສາມາດດາວໂຫຼດໜັງສືເຊີນໃນເວັບໄຊ້ຂອງຕະຫຼາດຫຼັກຊັບລາວ http://www.lsx.com.la ໃນກໍລະນີມອບສິດ ກະລຸນາຕື່ມຂໍ້ມູນ ພ້ອມທັງກ໊ອບປີ້ບັດປະຈຳຕົວ ຫຼື ໜັງສືຜ່ານແດນ ແລະ ລົງລາຍເຊັນໃນໃບມອບສິດ ແລ້ວສະແກນສົ່ງໃຫ້ບໍລິສັດ ທາງ ອີເມວ: info@pcdlao.com ຫຼື ແຟັກ: (856-21) 265394 ຫຼື ສົ່ງໃຫ້ເລຂາກອງປະຊຸມ ໂທ: (856-20) 2240 7393 ໃນໄມ່ລັດຖະການກ່ອນມື້ປະຊຸມ.

ຮຽນມາເພື່ອຊາບ ແລະ ຫວັງຢ່າງຍິ່ງວ່າທ່ານຈະໃຫ້ຄວາມຮ່ວມມືຕາມທາງຄວນດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ
ປະທານສະພາບໍລິຫານ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company

ສີທອງ ພິມມະຈິດ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ເອກະສານປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019

ວັນສຸກ ວັນທີ 29 ພຶດສະພາ 2020
ລົງທະບຽນເວລາ 13:00 ໂມງ
ສະຖານທີ່: ຊັ້ນ 12, ໂຮງແຮມ ຄອນທີເນັນໂທ ພລາຊາ,
ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856 (21) 265 394.

ເອກະສານຄັດຕິດ

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 (ເອກະສານຄັດຕິດ 1);
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 (ເອກະສານຄັດຕິດ 2);
3. ບົດລາຍງານ ແລະ ເອກະສານລາຍງານການເງິນ ປະຈຳປີ 2019 (ເອກະສານຄັດຕິດ 3);
4. ປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານຊຸດໃໝ່ ແລະ ສະມາຊິກອິດສະຫຼະ (ເອກະສານຄັດຕິດ 4);
5. ແບບຟອມໃບມອບສິດ (ເອກະສານຄັດຕິດ 5);
6. ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ (ເອກະສານຄັດຕິດ 6);
7. ແຜນທີ່ສະຖານທີ່ຈັດປະຊຸມ (ເອກະສານຄັດຕິດ 7).

ໝາຍເຫດ

1. ຜູ້ຖືຮຸ້ນທຸກທ່ານ ຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມຕັ້ງແຕ່ 18 ພຶດສະພາ 2020, ຢູ່ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ເລກໂທລະສັບ: (856-21) 454361-4;
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ;
3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງ ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ຕາມ **<u>ເອກະສານຄັດຕິດ 5</u>** ທີ່ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ;
4. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ 6</u>** ທີ່ໄດ້ຄັດຕິດມາພ້ອມ ແລະ ສົ່ງມອບໃຫ້ປະທານກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້;
5. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ກຳມະການອິດສະຫຼະຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດ ແລະ ໝາຍ (✓) ເພື່ອເລືອກເອົາຜູ້ອຳນວຍການຂອງບໍລິສັດ ທ່ານໃດທ່ານໜຶ່ງເປັນຜູ້ຕ່າງໜ້າ ແລະ ສົ່ງໃບມອບສິດດັ່ງກ່າວພ້ອມເອກະສານປະກອບ ສົ່ງເຖິງ ບໍລິສັດ ຫຼືສ້ຳສ້າງ ແລະ ພັດທະນາ ມະຫາຊົນ, ເລຂາກອງປະຊຸມບໍລິສັດ ທີ່ຊັ້ນ 3 ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ ແລະ ກະລຸນາສົ່ງເຖິງ ບໍລິສັດກ່ອນວັນທີ 29 ພຶດສະພາ 2020.
6. ຖ້າຫາກທ່ານໃດມີຂໍ້ສົງໄສ ແລະ ຄຳຖາມກ່ຽວກັບໃບມອບສິດ ລວມທັງລາຍລະອຽດໃນໜັງສືເຊີນປະຊຸມສະບັບນີ້ ທ່ານສາມາດສອບຖາມ ທ່ານ ເກດສະໜາ ຈັນທະວົງ ເບີໂທ (+856-21) 265 394 ຫຼື (+856-20) 2240 7393 ໃນໂມງລັດຖະການ.

ເອກະສານຄັດຕິດ 1

ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018

ຂໍ້ມູນປະກອບ: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ໄດ້ຈັດຂຶ້ນໃນວັນທີ 28 ກຸມພາ 2020 ໂດຍກອງປະຊຸມໄດ້ພິຈາລະນາວາລະຕ່າງໆ ແລະ ໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ ໂດຍມີລາຍລະອຽດຂອງບົດບັນທຶກກອງປະຊຸມຕາມ (ເອກະສານຄັດຕິດ 2).

ຄຳເຫັນຂອງສະພາບໍລິຫານ: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາວາລະນີ້.

ການລົງມະຕິ: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2019 ແລະ ເອກະສານລາຍງານການເງິນ ປະຈຳປີ 2019 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ

ຂໍ້ມູນປະກອບ:

I. ຜົນການດຳເນີນງານ ປະຈຳປີ 2019 ມີດັ່ງລຸ່ມນີ້:

- **ວຽກງານດ້ານການຕະຫຼາດ**

ຫຼັງຈາກ ບໍລິສັດຂອງພວກເຮົາ ເຊັນ MOU ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊເຊິ່ງມີມູນຄ່າ ປະມານ 4 ຕື້ກວ່າໂດລາ ແລະ ພວກເຮົາ ບໍລິສັດພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກໍ່ແມ່ນໜຶ່ງໃນ 4 ບໍລິສັດທີ່ໄດ້ຮັບການຂັດເລືອກເຂົ້າຮອບສຸດທ້າຍ ປະຈຸບັນແມ່ນຢູ່ໃນຂັ້ນຕອນສຳຫຼວດແລວທາງ ແລະ ອອກແບບຄິດໄລ່ປະເມີນລາຄາເພື່ອຍື່ນຕໍ່ເຈົ້າຂອງໂຄງການ ແລະ ກຽມເຊັນສັນຍາກໍ່ສ້າງໃນຂັ້ນຕໍ່ໄປ. ນອກນັ້ນພວກເຮົາຍັງວິ່ງເຕັ້ນຊອກຫາແລ່ງທຶນ ແລະ ຄູ່ຮ່ວມລົງທຶນຈາກຕ່າງປະເທດເພື່ອເຂົ້າມາພັດທະນາໂຄງການອະສັງຫາລິມະຊັບໂດຍການກໍ່ສ້າງໂຮງແຮມລະດັບ 4-5 ດາວທີ່ນະຄອນຫຼວງວຽງຈັນ, ຫຼວງພະບາງ ແລະ ຫມູ່ບ້ານຈັດສັນສະໄຫມໃຫມ່ສຳລັບບຸກຄົນທົ່ວໄປທີ່ມີລາຍໄດ້ຕ່ຳ ຈຳນວນ 200,000 ຫລັງໃນທົ່ວປະເທດ.

- **ການມອບພັນທະອາກອນ**

ການມອບພັນທະອາກອນໃຫ້ລັດ ປະຈຳ ປີ 2019

ລ/ດ	ລາຍການ	ລວມມູນຄ່າ (ກີບ)
1	ອາກອນມູນຄ່າເພີ້ມ	596,549,478
2	ອາກອນເງິນເດືອນ	42,943,000
3	ອາກອນກຳໄລ	143,172,635
	ລວມ	**782,665,113**

❖ **ວຽກງານດ້ານບຸກຄະລາກອນ**

ວັນທີ: 31/12/2019 ມີພະນັກງານທັງໝົດຈຳນວນ 177 ຄົນ, ບໍລິສັດໄດ້ເຮັດສຳເລັດການເຮັດປະກັນສັງຄົມ ໃຫ້ແກ່ ພະນັກງານທຸກຄົນ, ມີການກວດສຸຂະພາບປະຈຳປີ, ເຮັດວຽກຕາມວັນເວລາ ແລະ ມີມື້ລາພັກປະຈຳປີ ຕາມ ກົດໝາຍແຮງງານລາວວ່າງ0ອກ.

❖ **ຜົນການດຳເນີນງານທຽບໃສ່ແຜນປີ 2019**

ລດ	ຊື່ໂຄງການ	ມູນຄ່າປະຕິບັດຕົວຈິງທຽບໃສ່ແຜນປີ 2019	
1	ສ້ອມແປງຂົວ-ທາງ ແຂວງ ບໍ່ແກ້ວ ຫາ ຫຼວງນ້ຳທາ	0%	ບໍ່ທັນໄດ້ປະຕິບັດ(ລັດຖະບານໃຫ້ສະລໍການລົງທຶນສຳລັບໂຄງການທີ່ສະເໜີໃໝ່ ໃຫ້ຈັດ ເຂົ້າແຜນງົບປະມານ 2020-2021)
2	ສ້ອມແປງຂົວ-ທາງ ແຂວງ ອັດຕາປື	0%	ບໍ່ໄດ້ປະຕິບັດ(ຢູ່ໃນຂັ້ນຕອນລາຍງານລັດຖະບານຂໍອະນຸມັດງົບປະມານກໍ່ສ້າງ ພາຍຫຼັງທີ່ ລັດຖະບານຮັບຮອງງົບປະມານແລ້ວຈຶ່ງສາມາດລົງມືກໍ່ສ້າງໄດ້)
3	ສ້ອມແປງຂົວ-ທາງແຂວງ ບໍ່ແກ້ວ	0%	ບໍ່ໄດ້ຈັດຕັ້ງປະຕິບັດ(ຍ້ອນວ່າທາງແຂວງໄດ້ມີການແບ່ງສັນຍາເປັນສັນຍານ້ອຍ ເພື່ອນຳໃຊ້ ງົບປະມານຂອງແຂວງແກ້ໄຂກ່ອນ)
4	ສ້ອມແປງຂົວ-ທາງ ແຂວງ ຫຼວງພະບາງ	0%	ບໍ່ໄດ້ປະຕິບັດ(ຢູ່ໃນຂັ້ນຕອນສະເໜີຜ່ານງົບປະມານການກໍ່ສ້າງນຳລັດຖະບານ ລັດຖະບານ ໄດ້ມີການແນະນຳສະເພາະໂຄງການສະເໜີໃໝ່ແມ່ນໃຫ້ຈັດຢູ່ໃນສີກປີງົບປະມານ 2020-2021)

II. ເອກະສານລາຍງານການເງິນ ປະຈຳປີ 2019 ສາມາດສະຫຼຸບຕົວເລກໄດ້ດັ່ງນີ້:

ລາຍການ	2019	2018
ຊັບສິນທັງໝົດ (ລ້ານກີບ)	675,643	669,615
ໜີ້ສິນທັງໝົດ (ລ້ານກີບ)	166,770	150,755
ສ່ວນຂອງຜູ້ຖືຮຸ້ນ (ລ້ານກີບ)	508,873	518,860
ລາຍຮັບທັງໝົດ (ລ້ານກີບ)	5,590	0
ກຳໄລ/(ຂາດທຶນ) ສຸດທິ (ລ້ານກີບ)	(9,986)	(283,421)
ກຳໄລສຸດທິຕໍ່ຮຸ້ນ (ກີບ/ຮຸ້ນ)	(17.16)	(486.98)

ລາຍລະອຽດຂອງຮ່າງເອກະສານລາຍງານການເງິນ ປະຈຳປີ 2019 ຕາມ (ເອກະສານຄັດຕິດ 3).

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ຮັບຮອງເອົາວາລະນີ້.

<u>ການລົງມະຕິ</u>: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3: ພິຈາລະນາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2019

<u>ຂໍ້ມູນປະກອບ</u>: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 155 "ການຈ່າຍເງິນປັນຜົນ" ຫ້າມບໍ່ໃຫ້ບໍລິສັດຈ່າຍເງິນປັນຜົນ ເມື່ອບໍລິສັດຍັງມີຂາດທຶນຢ່າງຕໍ່ເນື່ອງໃນຊຸມປີຜ່ານມາ. ປີ 2019 ບໍລິສັດຂາດທຶນຈຳນວນ 9,986 ລ້ານກີບ.

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາວາລະນີ້.

<u>ການລົງມະຕິ</u>: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020

<u>ຂໍ້ມູນປະກອບ</u>: ໃນປີ 2020 ພກພ ໄດ້ເຊັນສັນຍາໂຄງການໃໝ່ຈຳນວນ 3 ໂຄງການ ແລະ ຈະສືບຕໍ່ດຳເນີນໂຄງການເກົ່າ ຈຳນວນ 2 ໂຄງການ, ຄາດວ່າຈະໄດ້ລົງທຶນລົງທຶນທັງໝົດປະມານ 31,479 ລ້ານກີບ ແລະ ຄາດວ່າຈະມີລາຍຮັບທັງໝົດ ປະມານ 56,896 ລ້ານກີບ. ລາຍລະອຽດດັ່ງລຸ່ມນີ້:

ໜ່ວຍ: ລ້ານກີບ

ລດ	ຊື່ໂຄງການ	ມູນຄ່າທີ່ຈະໄດ້ລົງທຶນ	ມູນຄ່າທີ່ຈະໄດ້ຮັບ
1	ສ້ອມແປງຂົວ-ທາງ ແຂວງ ບໍ່ແກ້ວ ຫາ ຫຼວງນ້ຳທາ	6,581	11,545
2	ສ້ອມແປງຂົວ-ທາງ ແຂວງອັດຕາປື	8,104	14,472
3	ສ້ອມແປງຂົວ-ທາງ ແຂວງ ຫຼວງພະບາງ	3,694	6,482
4	ກໍ່ສ້າງຍົກລະດັບທາງດິນແດງ ກິ່ວເຈຍ-ເມືອງຮົບ(ເມືອງໂພນທອງ) ແຂວງຫຼວງພະບາງ	3,400	8,234
5	ກໍ່ສ້າງທາງປູຢາງສອງຊັ້ນ ແລະຂົວເບຕົ້ງ ບ້ານອູ-ບ້ານສີບຸນເຮືອງ (ເມືອງຫຼວງພະບາງ ຫາ ເມືອງນານ) ແຂວງຫຼວງພະບາງ	9,700	16,165
ລວມ		**31,479**	**56,898**

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາວາລະນີ້.

<u>ການລົງມະຕິ</u>: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2020

<u>ຂໍ້ມູນປະກອບ</u>: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 154 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍການສະເໜີຂອງ ສະພາບໍລິຫານໄດ້ພິຈາລະນາເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ

ພິຈາລະນາອະນຸມັດແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ (PWC) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2020 ໂດຍມີຄ່າຈ້າງເປັນຈຳນວນເງິນບໍ່ເກີນ 35,000 ໂດລາສະຫາລັດ, PWC ເປັນບໍລິສັດກວດສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ. ໂດຍມີລາຍລະອຽດຄ່າຈ້າງຂອງປີຜ່ານມາມີດັ່ງລຸ່ມນີ້:

ປີ	ຜູ້ກວດສອບບັນຊີພາຍນອກ	ມູນຄ່າການກວດສອບ (ໂດລາສະຫາລັດ)
2017	ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	45,000
2018	ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	32,390
2019	ບໍລິສັດ ພຣາຍສ໌ວໍເຕີເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	35,690

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາວາລະນີ້.

<u>ການລົງມະຕິ</u>: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2020-2022

<u>ຂໍ້ມູນປະກອບ:</u> ອີງຕາມລະບຽບຂອງ ພກພ ແລະ ຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ສະບັບເລກທີ 10/ຄຄຊ, ລົງວັນທີ 26 ເມສາ 2019. ສະມາຊິກສະພາບໍລິຫານ ມີອາຍຸການ 2 ປີ ແລະ ການແຕ່ງຕັ້ງສະມາຊິກສະພາບໍລິຫານ ຕ້ອງ ຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ. ປັດຈຸບັນ ສະມາຊິກສະພາບໍລິຫານ ໄດ້ຄົບອາຍຸການແລ້ວ. ເຫັນດີສະເໜີໃຫ້ກອງປະຊຸມຮັບຮອງສະມາຊິກສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2020-2022 ມີລາຍຊື່ດັ່ງນີ້:

1. ທ່ານ ສີທອງ ພິມມະຈິດ ປະທານ
2. ທ່ານ ບຸນມີ ມະນີວົງ ຮອງປະທານ/ສະມາຊິກອິດສະຫຼະ
3. ທ່ານ ນັນທະລັດ ທິລະກຸນ ສະມາຊິກ/ສະມາຊິກອິດສະຫຼະ
4. ທ່ານ ສີທາ ພິມມະຈິດ ສະມາຊິກ
5. ທ່ານ ພູຂົງ ອ້ອນລະມະນີ ສະມາຊິກ

<u>ຄຳເຫັນຂອງສະພາບໍລິຫານ</u>: ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງເອົາວາລະນີ້.

<u>ການລົງມະຕິ</u>: ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກ່ວາເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ເອກະສານຄັດຕິດ 2

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----===000===-----

ເລກທີ:238 - -

ນະຄອນຫຼວງວຽງຈັນ, ວັນທີ: 13 MAR 2020

ບົດບັນທຶກ
ກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2018

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໄດ້ຈັດກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2018 ໃນວັນທີ 28 ກຸມພາ 2020 ເວລາ 14:30 ໂມງ, ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ T4, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ. ໂດຍການເປັນປະທານຂອງ ທ່ານ ສີທາ ພົມມະຈິດ, ສະມາຊິກສະພາບໍລິຫານ/ ຜູ້ອຳນວຍການໃຫ່ຍ. ມີຜູ້ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງທັງໝົດ 13 ທ່ານ ແລະ ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມ ແທນຈຳນວນ 147 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 160 ທ່ານ ເຊິ່ງຖືຮຸ້ນລວມກັນທັງໝົດ 572.648.000 ຮຸ້ນ, ເທົ່າກັບ 98,39% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ.ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບຂອງບໍລິສັດ.

ພິທີກອນ ໄດ້ນຳສະເໜີຜູ້ເຂົ້າຮ່ວມກອງປະຊຸມ ເຊິ່ງມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ສີທາ ພົມມະຈິດ — ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່;
2. ທ່ານ ນັນທະລັດ ທິລະກຸນ — ສະມາຊິກສະພາບໍລິຫານ/ສະມາຊິກອິດສະຫຼະ;
3. ທ່ານ ພູຂົງ ອ້ອນລະມະນີ — ສະມາຊິກສະພາບໍລິຫານ.

ທ່ານ ສີທອງ ພົມມະຈິດ ປະທານສະພາບໍລິຫານ ແລະ ທ່ານ ຂັນທະວົງ ດາລາວົງ ຮອງປະທານສະພາບໍລິຫານ/ ສະມາຊິກອິດສະຫຼະ ຕິດພາລະກິດຈຶ່ງບໍ່ສາມາດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ໃນຄັ້ງນີ້ໄດ້ ແລະ ໄດ້ແຕ່ງຕັ້ງ ທ່ານ ສີ ທາ ພົມມະຈິດ ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ເປັນປະທານກອງປະຊຸມແທນ.

ພ້ອມດຽວກັນນີ້ ກໍ່ຍັງມີທ່ານຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ທ່ານຕາງໜ້າຈາກຕະຫຼາດຫຼັກ ຊັບລາວ, ຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ, ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖື ຮຸ້ນ, ບັນດາຮອງຜູ້ອຳນວຍການ ແລະ ຄະນະກຳມະການກວດສອບພາຍໃນ ຂອງ ບໍລິສັດ.

ພິທີກອນໄດ້ແນະນຳກ່ຽວກັບການລົງຄະແນນສຽງ, ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນໃຫ້ ບັນດາທ່ານຜູ້ຖືຮຸ້ນ ຮັບຊາບ.

ປະທານກອງປະຊຸມ ໄດ້ກ່າວເປີດກອງປະຊຸມຢ່າງເປັນທາງການ ແລະ ໄດ້ລາຍງານວາລະໃນກອງປະຊຸມ ເຊິ່ງມີລາຍ ລະອຽດດັ່ງນີ້:

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ. Tel/Fax: (856-21) 265 394; E-mail: info@pcdlao.com; website: www.pcdlao.com

ວາລະທີ 01: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ

ທ່ານ ປະທານ ໄດ້ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ຕໍ່ກອງປະຊຸມດັ່ງນີ້:

- ວາລະທີ 1,3,4,6,7,8 ແມ່ນໄດ້ຈັດຕັ້ງປະຕິບັດຕາມການເຫັນດີ ຂອງກອງປະຊຸມຜູ້ຖືຮຸ້ນແລ້ວ;
- ວາລະທີ 2 ກອງປະຊຸມໄດ້ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018 ເຊິ່ງໃນການຈັດຕັ້ງປະຕິບັດຕົວຈິງ ພກພ ບໍ່ສາມາດດຳເນີນການຕາມແຜນທີ່ວາງໄວ້ໄດ້ ເນື່ອງຈາກວ່າ ໂຄງການຂອງ ພກພ ທີ່ໄດ້ປະຕິບັດຜ່ານມາ ແມ່ນຫຍັງບໍ່ທັນໄດ້ຮັບການຊຳລະຈາກເຈົ້າຂອງໂຄງການເປັນໄປຕາມກຳນົດເວລາໃນສັນຍາ ບໍລິສັດຈຶ່ງໄດ້ຊະລໍການລົງທຶນເພື່ອຫລຸດຜ່ອນຄວາມສ່ຽງໃນການລົງທຶນເພີ່ມ ຈຶ່ງເຮັດໃຫ້ບໍລິສັດບໍ່ສາມາດປະຕິບັດໄດ້ຕາມແຜນທີ່ຮອງຮັບຈາກກອງປຊຸມຜູ້ຖືຮຸ້ນປະຈຳປີ 2017;
- ວາລະທີ 5 ກອງປະຊຸມໄດ້ຮັບຮອງການແຕ່ງຕັ້ງ ຜູ້ກວດສອບບັນຊີພາຍນອກ ປະຈຳປີ 2018 ເຊິ່ງກຳນົດຄ່າຈ້າງຜູ້ກວດສອບບັນຊີພາຍນອກເປັນເງິນຈຳນວນ 118,000 ໂດລາສະຫາລັດ ໄລຍະເວລາ 3 ປີ (2018 – 2020) ສະເລ່ຍປີລະ ປະມານ 39,333 ໂດລາສະຫາລັດ ເປັນການເຊັນສັນຍາ ໃນເບື້ອງຕົ້ນ. ຜ່ານການເຮັດວຽກຕົວຈິງ ພກພ ມີລາຍການເຄື່ອນໄຫວໜ້ອຍລົງກວ່າທີ່ຄາດໄວ້ໃນເບື້ອງຕົ້ນ ພກພ ຈຶ່ງເຮັດສັນຍາເປັນປີຕໍ່ປີ. ໃນປີ 2018 ຄ່າກວດສອບພາຍນອກແມ່ນ 32,390 ໂດລາສະຫາລັດ.

ວາລະນີ້ເປັນການລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ, ໂດຍວາລະນີ້ບໍ່ມີການລົງຄະແນນສຽງ.

ຫຼັງຈາກນັ້ນ ປະທານ ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ວາລະທີ 02: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017

ທ່ານ ປະທານ ໄດ້ລາຍງານວ່າ: ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ໄດ້ຈັດຂຶ້ນໃນວັນທີ 25 ເມສາ 2018 ໂດຍກອງປະຊຸມໄດ້ພິຈາລະນາກິດຈະກຳຕ່າງໆ ເຊິ່ງກອງປະຊຸມດັ່ງກ່າວໄດ້ເຮັດບົດບັນທຶກຕາມເນື້ອໃນຂອງກອງປະຊຸມຢ່າງຖືກຕ້ອງ

ຫຼັງຈາກ ທ່ານ ປະທານ ໄດ້ລາຍງານແລ້ວ ແລະ ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນ.

ຕໍ່ມາ, ທ່ານ ປະທານ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງວາລະນີ້

<u>ມະຕິ</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ດັ່ງນີ້:

- ເຫັນດີ: ຈຳນວນ 572.624.000 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 03: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2018 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບແລ້ວຂອງບໍລິສັດ ປະຈຳປີ 2018

ທ່ານ ປະທານ ໄດ້ລາຍງານ ຕໍ່ກອງປະຊຸມດັ່ງນີ້:

I. ຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2018 ມີດັ່ງລຸ່ມນີ້:

1. ວຽກງານດ້ານບຸກຄະລາກອນ: ບໍລິສັດໄດ້ເນັ້ນນັກການຝຶກອົບຮົມ ແລະ ຖອດຖອນບົດຮຽນກັບອົງກອນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ, ດູແລຊີວິດການເປັນຢູ່ຂອງພະນັກງານພາຍໃນອົງກອນໃຫ້ດີຂຶ້ນ ບໍລິສັດໄດ້ເຮັດການສຳຫຼວດເພື່ອ ກະກຽມການສະໜອງປະກັນສັງຄົມໃຫ້ແກ່ພະນັກງານທຸກຄົນ, ກວດສຸຂະພາບປະຈຳປີ;
2. ວຽກງານດ້ານການຕະຫຼາດ: ບໍລິສັດກຳລັງກະກຽມເຊັນ MOU ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊ ເຊິ່ງມີມູນຄ່າ ປະມານ 4 ຕື້ກວ່າໂດລາສະຫາລັດ ແລະ ພກພ ເປັນໜຶ່ງໃນ 4 ບໍລິສັດທີ່ໄດ້ຮັບການຄັດເລືອກເຂົ້າຮອບສຸດທ້າຍ, ນອກນັ້ນ ພກພ ກຳລັງດຳເນີນໂຄງການອະສັງຫາລິມະຊັບໂດຍການກໍ່ສ້າງໂຮງແຮມລະດັບ 4-5 ດາວທີ່ນະຄອນຫຼວງວຽງຈັນ ແລະ ຫຼວງພະບາງ, ກະກຽມສະເໜີລາຄາສຳລັບໂຄງການໃຫຍ່ໆຂອງ ADB ແລະ WB;
3. ການມອບພັນທະອາກອນ: ພກພ ໄດ້ມອບພັນທະອາກອນໃຫ້ລັດປີ 2018 ລວມມູນຄ່າ 16,524,000 ກີບ.

II. ເອກະສານລາຍງານການເງິນທີ່ຜ່ານການກວດສອບ ປະຈຳປີ 2018 ສາມາດສະຫຼຸບຕົວເລກໄດ້ດັ່ງນີ້:

ລາຍການ	2018	2017
ຊັບສິນທັງໝົດ (ລ້ານກີບ)	669,615	946,844
ໜີ້ສິນທັງໝົດ (ລ້ານກີບ)	150,755	142,090
ສ່ວນຂອງຜູ້ຖືຮຸ້ນ (ລ້ານກີບ)	518,860	804,754
ລາຍຮັບທັງໝົດ (ລ້ານກີບ)	0	45,384
ກຳໄລ/(ຂາດທຶນ) ສຸດທິ (ລ້ານກີບ)	(283,421)	6,725
ກຳໄລສຸດທິຕໍ່ຮຸ້ນ (ກີບ/ຮຸ້ນ)	(486.98)	16.56

ຫຼັງຈາກ ທ່ານ ປະທານ ໄດ້ລາຍງານແລ້ວ ແລະ ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ ປະກອບຄຳເຫັນ.

ຕໍ່ມາ, ທ່ານ ປະທານ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງວາລະນີ້.

<u>ມະຕິ</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ດັ່ງນີ້:

- ເຫັນດີ: ຈຳນວນ 572.624.000 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 04: ພິຈາລະນາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2018 ເນື່ອງມາຈາກບໍລິສັດຂາດທຶນຈາກການດຳເນີນງານ

ທ່ານ ປະທານ ໄດ້ລາຍງານຕໍ່ກອງປະຊຸມວ່າ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 155 "ການຈ່າຍເງິນປັນຜົນ" ຫ້າມບໍ່ໃຫ້ບໍລິສັດຈ່າຍເງິນປັນຜົນ ເມື່ອບໍລິສັດຍັງມີຂາດທຶນຢ່າງຕໍ່ ເນື່ອງໃນຊຸມປີຜ່ານມາ.

ຫຼັງຈາກ ທ່ານ ປະທານ ໄດ້ລາຍງານແລ້ວ ແລະ ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ມີຜູ້ຖືຮຸ້ນໄດ້ ປະກອບຄຳເຫັນດັ່ງນີ້.

- ທ່ານ ນາງ ນາລິດສາລາ ສອນໃຈດີ ຜູ້ຮັບມອບສິດຈາກ ທ່ານ ໄກອັນ ກັນດາອານິດ ຜູ້ຖືຮຸ້ນຈາກໄທ: ຢາກຊາບວ່າເປັນຫຍັງບໍລິສັດຈັດກອງປະຊຸມສະພາບໍລິຫານທີ່ໂຮງແຮມ ແຕ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນນີ້ ທີ່ຕະຫຼາດຫຼັກຊັບລາວ ຄ່າໃຊ້ຈ່າຍລະຫວ່າງຈັດທີ່ໂຮງແຮມ ແລະ ຕະຫຼາດຫຼັກຊັບ ແຕກຕ່າງກັນຢ່າງໃດ.

- ທ່ານ ປະທານ ໄດ້ຊີ້ແຈງວ່າ: ບໍລິສັດຈັດກອງປະຊຸມສະພາບໍລິຫານທີ່ໂຮງແຮມ ເພາະຊັ້ນ 3 ໂຮງແຮມ ຄອນທີເນັນໂທ ພລາຊາ ເປັນສຳນັກງານຂອງບໍລິສັດ ແລະ ໂຮງແຮມດັ່ງກ່າວເປັນຂອງກຸ່ມບໍລິສັດ ພກພ, ເປັນໂຮງແຮມໃໝ່ ແລະ ບໍລິສັດ ຈະຈັດກອງປະຊຸມສາມັນ ປະຈຳປີ 2019 ທີ່ໂຮງແຮມນີ້ ສ່ວນຄ່າໃຊ້ຈ່າຍຈະໜ້ອຍກ່ວາຈັດທີ່ຕະຫຼາດຫຼັກຊັບ ລາວ.

ຕໍ່ມາ, ທ່ານ ປະທານ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງວາລະນີ້

<u>ມະຕິ</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ດັ່ງນີ້:

- ເຫັນດີ: ຈຳນວນ 572.647.800 ສຽງ ເທົ່າກັບ 99,99997% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີ: ຈຳນວນ 200 ສຽງ ເທົ່າກັບ 0,00003% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

ວາລະທີ 05: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019

ທ່ານ ປະທານ ໄດ້ລາຍງານຕໍ່ກອງປະຊຸມວ່າ: ພກພ ໄດ້ເຊັນສັນຍາເພື່ອສ້ອມແປງທາງກັບເຈົ້າຂອງໂຄງການເປັນໄລຍະ ເວລາ 3 ປີ (2019-2021) ຈຳນວນ 4 ໂຄງການ, ໃນປີ 2019 ພກພ ຄາດວ່າຈະສາມາດດຳເນີນການສ້ອມແປງແຕ່ລະ ເສັ້ນທາງ ແລະ ມີລາຍຮັບລວມທັງໝົດໃນປີປະມານ 289,244 ລ້ານກີບ. ລາຍລະອຽດດັ່ງລຸ່ມນີ້:

ລດ	ຊື່ໂຄງການ	ມູນຄ່າທີ່ຄາດວ່າຈະໄດ້ຮັບ ໃນປີ 2019 (ລ້ານກີບ)	ມູນຄ່າໂຄງການ (2019-2021) (ລ້ານກີບ)
1	ສ້ອມແປງທາງ ແຂວງ ບໍ່ແກ້ວ ຫາ ຫຼວງນ້ຳທາ	90,985	275,713
2	ສ້ອມແປງທາງ ແຂວງອັດຕາປື	109,160	330,787
3	ສ້ອມແປງທາງແຂວງ ບໍ່ແກ້ວ	38,021	126,638
4	ສ້ອມແປງທາງ ແຂວງ ຫຼວງພະບາງ	51,078	154,782
ລວມ		**289,244**	**887,920**

ຫຼັງຈາກ ທ່ານ ປະທານ ໄດ້ລາຍງານແລ້ວ ແລະ ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ບໍ່ມີຜູ້ຖືຮຸ້ນໄດ້ ປະກອບຄຳເຫັນ

ຕໍ່ມາ, ທ່ານ ປະທານ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງວາລະນີ້

<u>ມະຕິ</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ດັ່ງນີ້:

- ເຫັນດີ: ຈຳນວນ 572.648.000 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 06: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2019

ທ່ານ ປະທານ ໄດ້ລາຍງານຕໍ່ກອງປະຊຸມວ່າ: ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ ລົງວັນທີ 26 ທັນວາ 2013 ມາດຕາ 154 ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນຜູ້ຖືຮຸ້ນ ກຳນົດໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນເປັນຜູ້ເລືອກຕັ້ງຜູ້ກວດສອບບັນຊີ ແລະ ຄ່າຈ້າງຂອງຜູ້ກວດສອບບັນຊີ ໂດຍການສະເໜີຂອງ ສະພາບໍລິຫານໄດ້ພິຈາລະນາເຫັນຄວນໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ (PWC) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2019 ໂດຍມີຄ່າຈ້າງເປັນຈຳນວນເງິນບໍ່ເກີນ 35,690 ໂດລາສະຫາລັດ, ພາຍໄດ້ໃຊ້ບໍລິການ PWC ເປັນຜູ້ກວດສອບພາຍນອກປີ 2015 ຫາ 2018 ເຫັນວ່າການປະຕິບັດວຽກງານ ແລະ ການປະສານງານ ຂອງ PWC ຢູ່ໃນລະດັບດີສົມຄວນ, ມີປະສິບການ, ຜູ້ກວດສອບ ແລະ ທີມງານມີຄວາມເຂົ້າໃຈແຈ້ງໃນໜ້າທີ່, ມີຄວາມລະອຽດຮອບຄອບໃນການທົບທວນ ແລະ ເປັນບໍລິສັດກວດສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ. ໂດຍມີລາຍລະອຽດຄ່າຈ້າງແຕ່ລະປີມີດັ່ງລຸ່ມນີ້:

ປີ	ຜູ້ກວດສອບບັນຊີພາຍນອກ	ມູນຄ່າການກວດສອບ (ໂດລາສະຫາລັດ)
2016	ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	47,000
2017	ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	45,000
2018	ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	32,390
2019	ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າກຸບເປີສ (ລາວ) ຈຳກັດຜູ້ດຽວ	35,690

ຫຼັງຈາກ ທ່ານ ປະທານ ໄດ້ລາຍງານແລ້ວ ແລະ ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ມີຜູ້ຖືຮຸ້ນໄດ້ປະກອບຄຳເຫັນດັ່ງນີ້:

- ➢ ທ່ານ ນາງ ນາລິດສາລາ ສອນໃຈດີ ຜູ້ຮັບມອບສິດຈາກ ທ່ານ ໄກອັນ ກັນດາອານິດ ຜູ້ຖືຮຸ້ນຈາກໄທ:

1. ຕາມຕາຕະລາງລາຍຈ່າຍຄ່າກວດສອບ ປີທີ່ຜ່ານມາບໍລິສັດສາມາດຫຼຸດຄ່າໃຊ້ຈ່າຍໄດ້ ແຕ່ເພາະເຫດໃດປີ 2019 ຈຶ່ງເພີ່ມຂຶ້ນກວ່າປີ 2018;
2. ໃນລາວສາມມາດໃຊ້ຜູ້ກວດສອບບັນຊີພາຍນອກໜຶ່ງລາຍໄດ້ຈັກປີ ຄືທີ່ໄທ 5 ປີ ຕ້ອງປ່ຽນຜູ້ກວອສອບ?

- ➢ ທ່ານ ປະທານ ໄດ້ຊີ້ແຈງວ່າ:

1. ຄ່າກວດສອບປີ 2018 ຫຼຸດລົງຫຼາຍຍ້ອນໜ້າວຽກຫຼຸດລົງ ແຕ່ເພີ່ມຂຶ້ນບໍ່ຫຼາຍໃນປີ 2019 ເພາະຕາມສັນຍາທີ່ບໍລິສັດໄດ້ເຮັດກັບຜູ້ກວດສອບຄາດຈະມີໜ້າວຽກເພີ່ມຂຶ້ນ ເນື່ອງຈາກບໍລິສັດຈະໄດ້ປັບປຸງລະບົບບັນຊີໃຫ້ໄດ້ມາດຕະຖານ IFRS ແລະ ຕ້ອງອີງຕາມໜ້າວຽກຕົວຈິງລາຍຈ່າຍອາດຈະຫຼຸດແຕ່ບໍ່ເກີນມູນຄ່າທີ່ກຳນົດ;
2. 5 ປີ ຕ້ອງປ່ຽນຜູ້ກວດສອບໃໝ່ ຄືກັນ.

ຕໍ່ມາ, ທ່ານ ປະທານ ໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງວາລະນີ້

<u>ມະຕິ</u>: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ດັ່ງນີ້:

- ເຫັນດີ: ຈຳນວນ 572.648.000 ສຽງ ເທົ່າກັບ 100% ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ທ່ານປະທານກອງປະຊຸມ ໄດ້ແຈ້ງໃຫ້ຜູ້ຖືຮຸ້ນ ຊາບວ່າ ກອງປະຊຸມໄດ້ດຳເນີນຄົບຖ້ວນທຸກວາລະກອງປະຊຸມ ດັ່ງທີ່ໄດ້ກຳນົດໄວ້ໃນໜັງສືແຈ້ງເຊີນແລ້ວ ແລະ ໄດ້ສະເໜີໃຫ້ຜູ້ຖືຮຸ້ນປະກອບຄຳເຫັນອື່ນໆຕໍ່ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ແລະ ບໍ່ມີຜູ້ຖືຮຸ້ນປະກອບຄຳເຫັນ

ກອງປະຊຸມບໍ່ມີບັນຫາເພີ່ມເຕີມທີ່ຈະພິຈາລະນາ, ທ່ານປະທານກອງປະຊຸມໄດ້ກ່າວປິດກອງປະຊຸມລົງຢ່າງເປັນທາງການ ໃນເວລາ 15:30 ໂມງ ຂອງວັນດຽວກັນ.

ປະທານກອງປະຊຸມ | **ຜູ້ບັນທຶກກອງປະຊຸມ**

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
Phousy Construction and Development Public Company

ສີທາ ພົມມະຈິດ

<u>**ໝາຍເຫດ:**</u> ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ໃຫ້ຖືເອົາສະບັບພາສາລາວເປັນຫຼັກ

ຮ່າງເອກະສານລາຍງານການເງິນ ປະຈຳປີ 2019

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃບລາຍງານຖານະການເງິນ
ວັນທີ 31 ທັນວາ 2019

ຊັບສິນ	ຍິດ ອະທິບາຍ	2019 ລ້ານກີບ	2018 ລ້ານກີບ
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3	195	54
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	4	192,058	185,588
ເຄື່ອງໃນສາງ		319	322
ຊັບສິນໝຸນວຽນອື່ນໆ	5	7,675	4,073
ລວມຊັບສິນໝຸນວຽນ		**200,247**	**190,037**
ຊັບສິນບໍ່ໝຸນວຽນ			
ຊັບສົມບັດຄົງທີ່ ມີຕົວຕົນ, ສຸດທິ	6	474,530	478,712
ຊັບສົມບັດຄົງທີ່ ບໍ່ມີຕົວຕົນ, ສຸດທິ		5	5
ເງິນໃຫ້ກູ້ຢືມໄລຍະຍາວແກ່ພາກສ່ວນທີ່ກ່ຽວຂ້ອງ ແລະ ອື່ນໆ	7	861	861
ລວມຊັບສິນບໍ່ໝຸນວຽນ		**475,396**	**479,578**
ລວມຊັບສິນ		**675,643**	**669,615**
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	8	56,982	48,150
ພາກສ່ວນຂອງເງິນກູ້ຢືມໄລຍະຍາວ - ສະຖາບັນການເງິນ	9	38,422	38,422
ພາກສ່ວນຂອງເງິນກູ້ຢືມໄລຍະຍາວ - ພາກສ່ວນທີ່ກ່ຽວຂ້ອງ	9	4,200	3,200
ໜີ້ຕ້ອງສົ່ງອາກອນກຳໄລ	10	8,486	8,481
ໜີ້ສິນໝຸນວຽນອື່ນໆ	11	46,880	40,617
ລວມໜີ້ສິນໝຸນວຽນ		**154,970**	**138,870**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ - ພາກສ່ວນທີ່ກ່ຽວຂ້ອງ	9	11,800	11,885
ລວມໜີ້ສິນບໍ່ໝຸນວຽນ		**11,800**	**11,885**
ລວມໜີ້ສິນ		**166,770**	**150,755**
ທຶນ			
ທຶນຈົດທະບຽນ		582,000	582,000
ສ່ວນເກີນມູນຄ່າຮຸ້ນ	12	12,540	12,540
ກຳໄລ/(ຂາດທຶນ)ສະສົມ			
ຍັງສະສົມຕາມລະບຽບການ	13	11,572	11,572
ບໍ່ໄດ້ຈັດສັນ		(97,238)	(87,252)
ລວມທຶນ		**508,874**	**518,860**
ລວມໜີ້ສິນ ແລະ ທຶນ		**675,643**	**669,615**

Draft

ທ່ານ ສິທາ ພົມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ: xx ພຶດສະພາ 2020

ທ່ານ ອະໂນໄລ ສີທາລາດ
ຫົວໜ້າການເງິນ
ວັນທີ: xx ພຶດສະພາ 2020

ບົດອະທິບາຍຂ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 9-24 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານຜົນໄດ້ຮັບ
ສຳລັບທ້າຍປີສິ້ນສຸດວັນທີ 31 ທັນວາ 2019

	ບິດ ອະທິບາຍ	2019 ລ້ານກີບ	2018 ລ້ານກີບ
ລາຍຮັບຈາກການກໍ່ສ້າງ		5,590	-
ຕົ້ນທຶນໃນການຂາຍ	15	(3,507)	-
ກຳໄລເບື້ອງຕົ້ນ		**2,083**	**-**
ລາຍຮັບອື່ນໆ		3,414	3,903
ຂາດທຶນຈາກການດ້ອຍຄ່າ	15	-	(267,390)
ລາຍຈ່າຍບໍລິຫານ	15	(7,346)	(11,271)
ຂາດທຶນຈາກອັດຕາແລກປ່ຽນ ສຸດທິ		(44)	(358)
ລາຍຈ່າຍດອກເບ້ຍ	16	(7,944)	(8,305)
ຂາດທຶນ ກ່ອນລາຍຈ່າຍອາກອນກຳໄລ		**(9,837)**	**(283,421)**
ລາຍຈ່າຍອາກອນກຳໄລ	17	(149)	-
ຂາດທຶນ ສຳລັບປີ		**(9,986)**	**(283,421)**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານ (ຂາດທຶນ) ຕໍ່ຮຸ້ນ	18	(17.16)	(486.98)

Draft

ທ່ານ ສີທາ ພົມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ: xx ພຶດສະພາ 2020

ທ່ານ ອະໂນໄລ ສີທາລາດ
ຫົວໜ້າການເງິນ
ວັນທີ: xx ພຶດສະພາ 2020

ບໍລິສັດ ພຸສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບທ້າຍປີສິ້ນສຸດວັນທີ 31 ທັນວາ 2019

	ບົດອະທິບາຍ	2019 ລ້ານກີບ	2018 ລ້ານກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:			
ຂາດທຶນກ່ອນອາກອນກຳໄລສຳລັບປີ		(9,837)	(283,421)
ການດັດແກ້ການສົມທຽບກຳໄລສຸດທິ ແລະ ເງິນສົດສຸດທິ			
ຂາດທຶນຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ		-	(2,029)
ຄ່າຫຼຸ້ຍຫ້ຽນ	6	4,182	3,848
ຄ່າເຊື່ອມມູນຄ່າ		-	5
ລາຍຈ່າຍດອກເບ້ຍ	16	7,944	8,305
ຄ່າເຜື່ອປັນຊີໜີ້ເສຍ	4,15	-	266,091
ຂາດທຶນຄ່າດ້ອຍຄ່າ	6,15	-	1,299
ຂາດທຶນຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**2,289**	**(5,902)**
ການປ່ຽນແປງທຶນໝຸນວຽນ:			
- ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(6,470)	5,011
- ເຄື່ອງໃນສາງ		2	(300)
- ຊັບສິນໝຸນວຽນອື່ນໆ		(3,602)	(2,702)
- ຊັບສິນບໍ່ໝຸນວຽນອື່ນໝ		-	957
- ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		8,832	5,307
- ໜີ້ສິນໝຸນວຽນອື່ນໆ		(1,682)	6,095
ກະແສເງິນສົດທີ່ເກີດຈາກການດຳເນີນງານ		(631)	8,466
ອາກອນກຳໄລທີ່ຕ້ອງຈ່າຍ		(143)	(193)
ກະແສເງິນສົດທີ່ເກີດຈາກກິດຈະກຳການດຳເນີນງານ, ສຸດທິ		**(774)**	**8,273**
ກະແສເງິນສົດຈາກກິດຈະກຳການລົງທຶນ:			
ຊື້ຊັບສິນຄົງທີ	6	-	(33)
ຊື້ຊັບສິນຄົງທີທີ່ບໍ່ມີຕົວຕົນ		-	(10)
ກະແສເງິນສົດຈາກກິດຈະກຳການລົງທຶນ, ສຸດທິ		**-**	**(43)**
ກະແສເງິນສົດຈາກກິດຈະກຳການເງິນ			
ລາຍຮັບຈາກການກູ້ຢືມ	9	10,515	10,585
ຊຳລະຄືນເງິນກູ້ຢືມ	9	(9,600)	(8,800)
ຈ່າຍເງິນປັນຜົນ	14	-	(611)
ຈ່າຍດອກເບ້ຍ		-	(9,890)
ກະແສເງິນສົດຈາກກິດຈະກຳການເງິນ, ສຸດທິ		**915**	**(8,715)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ (ໝຸດລົງ), ສຸດທິ		141	(486)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ	3	54	540
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		-	-
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນທ້າຍປີ	3	**195**	**54**
ລາຍການທີ່ບໍ່ແມ່ນເງິນສົດ			
ຊັບສິນຄົງທີເພີ່ມຂຶ້ນຈາກການສະສາງ ໜີ້ຕ້ອງຮັບກັບກ່ຽ ມ.ມ ລິສັດ	6	-	4,069
ເງິນປັນຜົນຄ້າງຈ່າຍໃຫ້ຜູ້ຖືຮຸ້ນລາຍໃຫຍ່	14	-	1,863
ຊຳລະເງິນກູ້ຢືມສະສາງກັບປັນຊີໜີ້ຕ້ອງຮັບ ລູກຄ້າ	9	-	2,578

ທ່ານ ສີທາ ພົມມະຈັດ
ຜູ້ອຳນວຍການໃຫຍ່
ວັນທີ: xx ພຶດສະພາ 2020

ທ່ານ ອະໂນໄລ ສີທາລາດ
ຫົວໜ້າການເງິນ
ວັນທີ: xx ພຶດສະພາ 2020

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 9-24 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

Draft

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບທ້າຍປີສິ້ນສຸດວັນທີ 31 ທັນວາ 2019

	ບິດ ອະທິບາຍ	ທຶນຈົດທະບຽນ ລ້ານກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ລ້ານກີບ	ຄັງສະສົມຕາມ ລະບຽບການ ລ້ານກີບ	ກຳໄລ/(ຂາດທຶນ)ສະ ສົມລໍ້າແບ່ງປັນ ລ້ານກີບ	ລວມ ລ້ານກີບ
ຍອດຍົກມາໃນວັນທີ 1 ມັງກອນ 2018		582,000	12,540	11,572	198,642	804,754
ຈ່າຍເງິນປັນຜົນ	14	-	-	-	(2,473)	(2,473)
ຂາດທຶນສຳລັບປີ		-	-	-	(283,421)	(283,421)
ຍອດຄົງເຫຼືອວັນທີ 31 ທັນວາ 2018		**582,000**	**12,540**	**11,572**	**(87,252)**	**518,860**
ຍອດຍົກມາໃນວັນທີ 1 ມັງກອນ 2019		582,000	12,540	11,572	(87,252)	518,860
ຂາດທຶນສຳລັບປີ		-	-	-	(9,986)	(9,986)
ຍອດຄົງເຫຼືອວັນທີ 31 ທັນວາ 2019		**582,000**	**12,540**	**11,572**	**(97,238)**	**508,874**

Draft

ທ່ານ ສີທາ ພົມມະຈິດ
ຜູ້ອຳນວຍການໃຫຍ່
ວັນທີ: xx ພຶດສະພາ 2020

ທ່ານ ອະໂນໄລ ສີຫາລາດ
ຫົວໜ້າການເງິນ
ວັນທີ: xx ພຶດສະພາ 2020

ບິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 9-24 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ຊີວະປະຫວັດຫຍໍ້

ທ່ານ ສີທອງ ພິມມະຈິດ
ຕຳແໜ່ງ: ປະທານສະພາບໍລິຫານ
ບ້ານ ຈອມມະນີ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ໂທລະສັບມືຖື: (856-20) 99996666
ວັນເດືອນປີເກີດ: ວັນທີ 02 ມັງກອນ 1974
ສັນຊາດ: ລາວ
ອີເມວ: Sithong6666@hotmail.com



ວຸດທິການສຶກສາ	
2018	ປຣິນຍາເອກບໍລິຫານທຸລະກິດ ຈາກມະຫາວິທະຍາໄລຊຽງໃຫມ່ ປະເທດໄທ
2014	ປະຣິນຍາໂທບໍລິຫານທຸລະກິດ ຈາກວິທະຍາໄລບໍລິຫານທຸລະກິດ ແສງສະຫວັນ, ນະຄອນຫຼວງວຽງຈັນ, ສປປ ລາວ
2000	ປຣິນຍາຕີ ຄູຄະນິດສາດ ວິທະຍາໄລຄູ ຫຼວງພະບາງ

ປະສົບການປະກອບວິຊາຊີບ	
2001-2005	ຜູ້ຈັດການພາກສະໜາມ ບໍລິສັດ ພູສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວທາງ ຈຳກັດຜູ້ດຽວ
2005-2013	ເປັນອຳນວຍການ ບໍລິສັດ ພູສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວທາງ ຈຳກັດຜູ້ດຽວ
2013 ເຖິງ ປະຈຸບັນ	ປະທານ ບໍລິສັດ ພູສີ ກຣຸບ ຈຳກັດຜູ້ດຽວ ຜູ້ອຳນວຍການ LUANG PRABANG LAOS HOLDING PTE.LTD
2014 ເຖິງ ປະຈຸບັນ	ຜູ້ອຳນວນການ ບໍລິສັດ ພູສີ ລາວເຊື້ອໄຟ ຈຳກັດຜູ້ດຽວ
2015 ເຖິງ ປະຈຸບັນ	ເປັນຜູ້ຖືຮຸ້ນສັດສ່ວນ 49% ຂອງບໍລິສັດ ປິໂຕຣ ສະມາຣ໌ດ ເທຣດດິ້ງ ຈຳກັດ
2016 ເຖິງ ປະຈຸບັນ	ປະທານສະພາບໍລິຫານ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

ຊີວະປະຫວັດຫຍໍ້

ທ່ານ ບຸນມີ ມະນີວົງ
ຕຳແໜ່ງ: ຮອງປະທານສະພາບໍລິຫານ/ສະມາຊິກອິດສະຫຼະ
ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ ,ນະຄອນຫຼວງວຽງຈັນ
ໂທລະສັບມືຖື: (856-20) 99949399
ວັນເດືອນປີເກີດ: ວັນທີ 14 ເມສາ 1954
ສັນຊາດ: ລາວ



ວຸດທິການສຶກສາ	
1997-1998	ໃບຢັ້ງຢືນຮຽນບຳລຸງ ທິດສະດີການເມືອງ-ການປົກຄອງຊັ້ນສູງ, ສະຖາບັນການເມືອງ ການປົກຄອງແຫ່ງຊາດ, ນະຄອນຫຼວງວຽງຈັນ
1984	ຊັ້ນສູງ ໂຮງຮຽນການເມືອງການປົກຄອງ ຈາກ ສສ ຫວຽດນາມ
1977-1978	ໃບຢັ້ງຢືນບຳລຸງວິຊາພາສີ-ອາກອນ ໂຮງຮຽນການເງິນແຂວງຫຼວງພະບາງ.

ປະສົບການປະກອບວິຊາຊີບ	
2014	ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ
2009-2011	ຫົວໜ້າຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ
2001-2009	ຫົວໜ້າກົມສົ່ງເສີມ ແລະ ພັດທະນາສິນຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ
1998-2001	ຄະນະຊີ້ນຳພັດທະນາຊົນນະບົດຂັ້ນສູນກາງ, ທັງເປັນຫົວໜ້າຫ້ອງການຄະນະຊີ້ນຳພັດທະນາຊົນນະບົດ ແລະ

ຫຼຸດຜ່ອນຄວາມທຸກຍາກ ຂຶ້ນກັບຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

1993-1997 ຮອງເຈົ້າແຂວງຫຼວງພະບາງ

1982-1993 ຫົວໜ້າພະແນກການເງິນແຂວງຫຼວງພະບາງ

1979-1982 ຫົວໜ້າອຳນວຍການໂຮງຮຽນການເງິນ ແຂວງຫຼວງພະບາງ

1975-1979 ຫົວໜ້າຫ້ອງການພາສີ-ອາກອນ ແຂວງຫຼວງພະບາງ

1973-1975 ພະນັກງານບັນຊີສາງປະຈຳຢູ່ເຂດຊາຍແດນຫວຽດນາມ-ຈີນ, ພະແນກການເງິນ ແຂວງຫຼວງພະບາງ

1968-1972 ພະນັກງານຄົດໄລ່ງົບປະມານຂອງ ພະແນກການເງິນ ແຂວງຫຼວງພະບາງ.

ຊີວະປະຫວັດຫຍໍ້

ທ່ານ ນັນທະລັດ ທິລະກຸນ



ຕຳແໜ່ງ: ສະມາຊິກອິດສະຫຼະ
ບ້ານ ວຽງຄຳ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ
ໂທລະສັບມືຖື: (856-20) 56110372
ວັນເດືອນປີເກີດ: ວັນທີ 05 ມັງກອນ 1970
ສັນຊາດ: ລາວ
ອີເມວ: thirakul@hotmail.com

ວຸດທິການສຶກສາ

- ຊັ້ນສູງການບໍລິຫານ ວິທະຍາໄລ Fanshawe ກຸງລອນດອນ.

ປະສົບການປະກອບວິຊາຊີບ

2016 ເຖິງ ປັດຈຸບັນ ສະມາຊິກອິດສະຫຼະ/ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
2011 -2016 ຜູ້ອຳນວຍການ/ Consultant – Accounting Company
2009 – 2011 ຜູ້ອຳນວຍການ/ Petroff Communication
2001 – 2003 ຜູ້ຈັດການ/ Canada Life Insurance

ຊີວະປະຫວັດຫຍໍ້

ທ່ານ ສີທາ ພົມມະຈິດ



ຕຳແໜ່ງ: ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່
ບ້ານ ຫ້ວຍຫົ່ງ, ເມືອງຈັນທະບູລີ, ນະຄອນຫຼວງ
ໂທລະສັບມືຖື: (856-20) 99996668
ວັນເດືອນປີເກີດ: ວັນທີ 25 ມີນາ 1984
ສັນຊາດ: ລາວ
ອີເມວ: sithaphc9999@yahoo.com

ວຸດທິການສຶກສາ

2013-2015 ປະລິນຍາໂທ ສາຂາບໍລິຫານທຸລະກິດ, ມະຫາວິທະຍາໄລອັຕະນະ ບໍລິຫານທຸລະກິດ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.

2003-2007 ປະລິນຍາຕີ ສາຂາວິທະຍາສາດທຳມະຊາດ, ມະຫາໄລແຫ່ງຊາດ, ບ້ານດົງໂດກ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ.

2004-2006 ຊັ້ນສູງ ສາຂາບໍລິຫານ ວິທະຍາໄລເສດຖາ, ບ້ານຈອມມະນີ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

ປະສົບການປະກອບວິຊາຊີບ	
2018 ເຖິງ ປັດຈຸບັນ	ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
2016 -2018	ສະມາຊິກສະພາບໍລິຫານ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
2006 –2016	ຮອງຜູ້ອຳນວຍການ/ບໍລິສັດ ພູສີຫຼວງພະບາງກໍ່ສ້າງ ແລະ ສ້ອມແປງຂົວ-ທາງ ຈຳກັດຜູ້ດຽວ

ຊີວະປະຫວັດຫຍໍ້

ທ່ານ ພູຂົງ ອ້ວນລະມະນີ

ຕຳແໜ່ງ: ສະມາຊິກສະພາບໍລິຫານ

ບ້ານ ໂນນຄໍ້ໃຕ້, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

ໂທລະສັບມືຖື: (856-20) 2222 4861

ວັນເດືອນປີເກີດ: ວັນທີ 12 ມີນາ 1976

ສັນຊາດ: ລາວ

ມີເມວ: phoukhonghai@gmail.com



ວຸດທິການສຶກສາ	
2006-2007	ປະລິນຍາໂທ ທາງດ້ານການຄ້າລະຫວ່າງປະເທດ, ມະຫາວິທະຍາໄລປາຣີ, ຊອກບອນ ປາຣີ VI, ປະເທດຝະລັ່ງເສດ.
2005-2006	ປະລິນຍາໂທ ທາງດ້ານບໍລິຫານທຸລະກິດ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ຫຼັກສູດ ສາກົນ, ນະຄອນຫຼວງວຽງຈັນ, ສປປ ລາວ.
1999-2000	ປະລິນຍາຕີ ທາງດ້ານບໍລິຫານທຸລະກິດ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ຫຼັກສູດ ສາກົນ, ນະຄອນຫຼວງວຽງຈັນ, ສປປ ລາວ.
1999 (6 ເດືອນ)	ໂຮງຮຽນເອກະພາບ ເພື່ອການບໍລິການ ແລະ ການສຶກສາ, ນະຄອນຫຼວງວຽງຈັນ, ສປປ ລາວ.
1999 (5 ເດືອນ)	ໃບຢັ້ງຢືນບັນຊີວິສາຫະກິດລາວ ຢູ່ວິທິຍາໄລ ລັດຕະນະ ບໍລິຫານທຸລະກິດ, ນະຄອນຫຼວງວຽງຈັນ, ສປປ ລາວ.
1993-1998	ປະລິນຍາຕີ ທາງດ້ານອັກສອນສາດ, ລີງເລີກຄູສອນພາສາຝະລັ່ງເສດ, ຄະນະອັກສອນສາດ, ມະຫາວິທະຍາໄລແຫ່ງຊາດ, ສປປ ລາວ.
1990-1993	ມັດທະຍົມຕອນປາຍ ປາກເຊ, ແຂວງຈຳປາສັກ, ສປປ ລາວ.

ປະສົບການປະກອບວິຊາຊີບ	
ມັງກອນ 2018 ເຖິງ ປັດຈຸບັນ	ບໍລິສັດ ພູສີ ກຣຸບ / ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຜູ້ຊ່ວຍ ທ່ານປະທານ ບໍລິສັດພູສີ ກຣຸບ/ ສະມາຊິກສະພາບໍລິຫານ
ທັນວາ 2012 – ມິຖຸນາ 2017	ກະຊວງການເງິນ, ກົມພາສີ, ອົງການອຳນວຍຄວາມສະດວກ ທາງດ້ານພາສີ ແລະ ການຄ້າ, ຜູ້ວິເຄາະໂຄງການ (ທີ່ປຶກສາ) ຂອງ ທະນາຄານໂລກ
ມິຖຸນາ 09 – ກໍລະກົດ 2010	ກຸ່ມບໍລິສັດ ພອນສັກ (ໂຄງການບໍ່ຄຳ ຄຳເກີດ ແສນອຸດົມ) ຜູ້ຈັດການຝ່າຍບຸກຄະລາກອນ ປະຈຳພາກສະໜາມ
ມັງກອນ 09 - ພຶດສະພາ 2009	ກຸ່ມບໍລິສັດ ພອນສັກ (ໂຄງການບໍ່ຄຳ ຄຳເກີດ ແສນອຸດົມ) ຜູ້ປະສານງານໂຄງການ ແລະ ຫົວໜ້າຝ່າຍບໍລິຫານ
ພຶດສະພາ 08 - ທັນວາ 08	ບໍລິສັດ ທີ່ປຶກສາດ້ານການພັດທະນາ ແລະ ວິສະຫະກິດ, ທີ່ປຶກສາ/ຄູຝຶກ
ມິຖຸນາ 08 – ພຶດສະພາ 09	ວິທະຍາໄລ ລາວ ອາເມລິກາ, ຄູສອນຮັບເຊີນ ວິຊາການຕະຫຼາດ Lao
ກໍລະກົດ 07 – ເມສາ 08	ບໍລິສັດແຊນ ແຫ່ງປະເທດລາວ, ພະນັກງານຝຶກເປັນຜູ້ຈັດການຂົນສົ່ງ ແລະ ຈັດແຜນການ

	ຂົນສົ່ງຕາມໃບສັ່ງຊື້ຈາກລູກຄ້າ
ກຸມພາ 03 – ຕຸລາ 04	ສະຖານບັນ ສຸດສະກະ ເພື່ອການບໍລິຫານ ແລະ ເທັກໂນໂລຊີ/ຮອງອຳນວຍການ
ມັງກອນ 02 – ທັນວາ 02	ບໍລິສັດ Luamit & Hyokwant ຈຳກັດ; ຜູ້ຈັດການ
ສິງຫາ 00 – ພະຈິກ 0:	ບໍລິສັດອິນໄຊດ໌ ເອເຊຍ (ບໍລິສັດທີ່ປຶກສາ ສຳຫຼວດທາງດ້ານການຕະຫຼາດ)/ຜູ້ຈັດການຫ້ອງການ

ຫຼັກສູດຝຶກອົບຮົມ

24-25 ເມສາ 2017	ເຂົ້າຮ່ວມການຝຶກອົບຮົມກ່ຽວກັບການກະກຽມວຽກງານຝຶກຕົວຈິ່ງ ແລະການຄຸ້ມຄອງສັນຍາວຽກງານການກໍ່ສ້າງ ທີ່ຫ້ອງການທະນາຄານໂລກ
09-10 ມີຖຸນາ 2015	ເຂົ້າຮ່ວມການຝຶກອົບຮົມວຽກງານຈັດຊື້ຈັດຈ້າງ ສິນຄ້າ ແລະ ການກໍ່ສ້າງ ໂດຍນຳໃຊ້ນະໂຍບາຍຂອງ ທະນາຄານໂລກ ແລະ ຄູ່ມືການແນະນຳ, ທີ່ໂຮງແຮມ ເສດຖາປຣາລາດ
17-18 ມີຖຸນາ 2014	ເຂົ້າຮ່ວມການຝຶກອົບຮົມວຽກງານຈັດຊື້ຈັດຈ້າງ ສິນຄ້າ ແລະ ການກໍ່ສ້າງ ໂດຍນຳໃຊ້ນະໂຍບາຍຂອງ ທະນາຄານໂລກ ແລະ ຄູ່ມືການແນະນຳ, ທີ່ໂຮງແຮມ ເສດຖາປຣາລາດ
12 ພະຈິກ-24 ທັນວາ 11	ເຂົ້າຮ່ວມຝຶກອົບຮົມ ກ່ຽວກັບ ໄມໂຄຣຊອບອອບພິດ ເຊັ່ນ: Word-Excel ໃນລະດັບຂັ້ນສູງ ຢູ່ ວິທະຍາໄລ ລາວສິງກະໂປ
18-20 ພຶດສະພາ 2011	ເຂົ້າຮ່ວມການຝຶກອົບຮົມໄມໂຄຣຊອບ ໂປຣເຈັກ 2007, ການບໍລິຫານໂຄງການ ທີ່ປະເທດໄທ, ບາງກອກ
ພະຈິກ 08 (17-23)	ເຂົ້າຮ່ວມສຳມະນາຂອງບໍລິສັດ ຮອນດາ ກ່ຽວກັບຜູ້ປະກອບການໃນທະວີອາຊີ, ຈັດຕັ້ງໂດຍ ອົງການ ຜະລິດຕພາບ ແຫ່ງ ເອເຊຍ, ຢູ່ເມືອງໂຕກຽວ, ກຽວໂຕ, ປະເທດຍີ່ປຸ່ນ
ສິງຫາ 08 (25-29)	ເຂົ້າຮ່ວມການຝຶກອົບຮົມ ກ່ຽວກັບການສ້າງກຸ່ມທຸລະກິດ ໃຫ້ແກ່ຄູ່ຝຶກ ທີ່ນນະຄອນຫຼວງວຽງຈັນ, ສປປ ລາວ
ທັນວາ 07 (7 ວັນ)	ເຂົ້າຮ່ວມຝຶກອົບຮົມ ໃຫ້ແກ່ຫົວໜ້າຄວາມປອດໄພ ຢູ່ສະຖານທີ່ເຮັດວຽກ, ບໍລິສັດແຊ ແຫ່ງປະເທດໄທ
ເມສາ-ພຶດສະພາ 05	ຮຽນຫຼັກສູດຜູ້ປະກອບການ ທີ່ສູນສົ່ງເສີມພັດທະນາຜູ້ປະກອບການລາວ ອິນເດຍ ທີ່ ນະຄອນຫຼວງວຽງ ຈັນ, ສປປ ລາວ
2000 (7 ວັນ)	ໄປທັດສະນະສຶກສາຢູ່ສະຖາບັນເທັກໂນໂລຊີອາເຊຍ ແຫ່ງປະເທດໄທ.

ຊີວະປະຫວັດຫຍໍ້ສະມາຊິກອົດສະຫຼະ

ທ່ານ ຂັນທະວົງ ດາລາວົງ

ບ້ານ ຕານມີໄຊ, ເມືອງໄຊທານີ, ນະຄອນຫຼວງ.
ໂທລະສັບມືຖື: (856-20) 55599153.
ວັນເດືອນປີເກີດ: ວັນທີ 10 ມີຖຸນາ 1961.
ສັນຊາດ: ລາວ.
ອີເມວ: khanthavong1958@gmail.com



ວຸດທິການສຶກສາ

- ປະລິນຍາໂທ ຄະນິດສາດ, ມະຫາວິທະຍາໄລໂອນໂກກຣາດ, ປະເທດຣັດເຊຍ.
- ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລຂອນແກ່ນ.
- ປະລິນຍາຕີ ການກໍ່ສ້າງ ແລະ ການສ້າງພັກ, ມະຫາວິທະຍາໄລ ໂອນໂກກຣາດ,ປະເທດຣັດເຊຍ.
- ປະລິນຍາຕີ ຄະນິດສາດ, ມະຫາວິທະຍາໄລ ໂອນໂກກຣາດ, ປະເທດຣັດເຊຍ.
- ປະລິນຍາຕີ ດົນຕີ, ມະຫາວິທະຍາໄລ ດົນຕີ ໂມສໂກ, ປະເທດຣັດເຊຍ.
- ປະລິນຍາຕີ ຄຸ້ມຄອງອຸດສາຫະກຳ, ປະເທດຣັດເຊຍ.
- ປະລິນຍາຕີ ການຄອມພິວເຕີ (ມິເດຍ) ສ້າງພາບພະຍົນ, ມະຫາວິທະຍາໄລ RECSAM.
- ຊັ້ນສູງ ຄະນິດສາດໂຮງຮຽນ ສ້າງຄູ ເລກ 3.

ປະສົບການປະກອບວິຊາຊີບ

2016 ເຖິງ ປັດຈຸບັນ ຮອງປະທານສະພາບໍລິຫານ / ສະມາຊິກອົດສະຫຼະ, ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

2015ເຖິງ ປັດຈຸບັນ ທີ່ປຶກສາ (ມາດຕະຖານ ແລະ ການຄຸ້ມຄອງລະບົບ ISO)/ສູນຢັ້ງຢືນມາດຕະຖານ ແລະ ກວດກາ ຄຸນະພາບແຫ່ງຊາດ.

2006-2016 ເລຂາທິການ (ບໍລິຫານສະພາ)/ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ.

2004-2006 ຊ່ຽວຊານງານຫຼັກສູດ ແລະ ຕຳລາຮຽນ (ບໍລິຫານໂຄງການ)/ໂຄງການ TTES ກະຊວງສຶກສາທິການ.

2000-2004 ຜູ້ອຳນວຍການ (ຜູ້ບໍລິຫານໂຮງງານທັງສອງແຫ່ງ)/ໂຮງງານເຫຼັກຊຽງຄວນ ແລະ ໂຮງງານສັງກະສີໂພນທັນ.

1999-2000 ຫົວໜ້າພະແນກບໍລິຫານທຸລະກິດ (ອາຈານສອນ ວິຊາ ທຸລະກິດ)/ມະຫາວິທະຍາໄລແຫ່ງຊາດ.

1990-1999 ຫົວໜ້າໜ່ວຍງານວິທະຍາສາດທຳມະຊາດ (ຊ່ຽວຊານດ້ານຫຼັກສູດ)/ສູນພັດທະນາຄູ.

1990-1993 ຫົວໜ້າພະແນກຄະນິດສາດ (ອາຈານສອນ ຄະນິດສາດ)/ໂຮງຮຽນສ້າງຄູ ດົງໂດກ.

1981-1983 ຫົວໜ້າພະແນກທຳມະຊາດ (ອາຈານສອນ ຄະນິດສາດ)/ໂຮງຮຽນສ້າງຄູເລກ 3.

1976-1978 ຫົວໜ້າຊີ້ນຳປະຊາສຶກສາເຂດຊົນເຜົ່າມົ້ງ (ອາຈານສອນ ຄະນິດສາດ)/ສຶກສາສູນກາງວຽງໄຊ.

ຫຼັກສູດຝຶກອົບຮົມ

- ວິທີການສ້າງຫຼັກສູດ ແລະ ຕຳລາຮຽນ, ມະຫາວິທະຍາໄລ ສິນະຄະຮິນ ວິໂຮດ.
- ວິທີການບໍລິຫານອຸດສາຫະກຳ ແລະ ຄວາມສ່ຽງ, ສະຖາບັນການສຶກສາ ໂກຣິມໂບ.
- ການຄຸ້ມຄອງຄຸນນະພາບ ແລະ ການກວດສອບ, ສະຖາບັນການສົ່ງເສີມອຸດສາຫະກຳ.
- ການຄຸ້ມຄອງລິຂະສິດທາງປັນຍາ, ສະຖາບັນຈັນຍາບັນເຈນີວາ.

ຊີວະປະຫວັດຫຍໍ້ສະມາຊິກອິດສະຫຼະ

ທ່ານ ນັນທະລັດ ທິລະກຸນ.
ບ້ານ ວຽງຄຳ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ.
ໂທລະສັບມືຖື: (856-20) 56110372.
ວັນເດືອນປີເກີດ: ວັນທີ 05 ມັງກອນ 1970.
ສັນຊາດ: ລາວ.
ອີເມວ: thirakul@hotmail.com



ວຸດທິການສຶກສາ

- ຊັ້ນສູງການບໍລິຫານ ວິທະຍາໄລ Fanshawe ກຸງລອນດອນ.

ປະສົບການປະກອບວິຊາຊີບ

2016 ເຖິງ ປັດຈຸບັນ	ສະມາຊິກອິດສະຫຼະ/ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ.
2011 -2016	ຜູ້ອຳນວຍການ/ Consultant – Accounting Company.
2009 – 2011	ຜູ້ອຳນວຍການ/ Petroff Communication.
2001 – 2003	ຜູ້ຈັດການ/ Canada Life Insurance.

ເອກະສານຄັດຕິດ 5

ໃບມອບສິດ

ຂຽນທີ.....

ວັນທີ.....ເດືອນ.....ປີ.....

(1) ຂ້າພະເຈົ້າ.....ສັນຊາດ.....ວັນທີ ເດືອນ ແລະ ປີເກີດ..... ບັດປະຈຳຕົວເລກທີ ຫຼື ໜັງສືຜ່ານແດນ ເລກທີ.....ເຮືອນເລກທີ..... ຖະໜົນ..... ບ້ານ .....ເມືອງ..... ແຂວງ.....ປະເທດ.....

(2) ເປັນຜູ້ຖືຮຸ້ນຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ..... ຮຸ້ນ ເຊິ່ງເທົ່າກັບຈຳນວນທີ່ຈະລົງຄະແນນສຽງໄດ້.

(3) ຂໍມອບໝາຍໃຫ້ (ກະລຸນາໃສ່ເຄື່ອງໝາຍ ✓ ລົງໃນຊ່ອງຜູ້ຮັບມອບສິດພຽງທ່ານໃດທ່ານໜຶ່ງ)

☐ (3.1) ທ່ານ/ທ່ານ ນາງ.....ອາຍຸ.....ປີ ບັດປະຈຳຕົວເລກທີ ຫຼື ໜັງສືຜ່ານແດນເລກທີ....., ເຮືອນເລກທີ.....ບ້ານ..... ເມືອງ.....ແຂວງ ....., ປະເທດ..... ຫຼື

☐ (3.2) ທ່ານ ຂັນທະວົງ ດາລາວົງ ອາຍຸ 59 ປີ, ບ້ານ ຕາມມີໄຊ ເມືອງ ໄຊທານີ ແຂວງ ນະຄອນຫຼວງວຽງຈັນ ປະເທດ ລາວ ຫຼື

☐ (3.3) ທ່ານ ນັນທະລັດ ທິລະກຸນ ອາຍຸ 50 ປີ, ບ້ານ ວຽງຄຳ ເມືອງ ສີໂຄດຕະບອງ ແຂວງ ນະຄອນຫຼວງວຽງຈັນ ປະເທດ ລາວ

ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2019 ເວລາ 13:00 ໂມງ ຢູ່ຊັ້ນ 12, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງ ວຽງຈັນ, ສປປ ລາວ ຫຼື ມື້ທີ່ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມ ດັ່ງນີ້:

- ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ; ຫຼື
- ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດຈະພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໃນ ບາງວາລະ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້); ຫຼື
- ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້)

ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນງານຂອງບໍລິສັດ ປະຈຳປີ 2019 ແລະ ເອກະສານລາຍງານການເງິນ ປະຈຳປີ 2019 ທີ່ຜ່ານການກວດສອບຈາກບໍລິສັດກວດສອບ

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 3: ພິຈາລະນາການບໍ່ຈ່າຍເງິນປັນຜົນ ປະຈຳປີ 2019

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 4: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 5: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກປະຈຳປີ 2020

☐ ເຫັນດີ ☐ ບໍ່ເຫັນດີ

ວາລະທີ 6: ພິຈາລະນາ ແລະ ຮັບຮອງສະພາບໍລິຫານຊຸດໃໝ່ ວາລະເຮັດວຽກປີ 2020-2022

☐ ເຫັນດີ ☐ ບໍ່ເຫັນດີ

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະການປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໜັງສືມອບສິດສະບັບນີ້ໃຫ້ຖືວ່າການລົງຄະແນນສຽງນັ້ນ ບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າໃນຖານະຜູ້ຖືຮຸ້ນ;

(6) ໃນກໍລະນີທີ່ຂ້າພະເຈົ້າບໍ່ໄດ້ລະບຸຈຸດປະສົງໃນການອອກສຽງລົງຄະແນນໃນວາລະໃດໄວ້ ຫຼື ລະບຸໄວ້ບໍ່ຊັດເຈນ ໃຫ້ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ;

(7) ທຸກການກະທຳທີ່ຜູ້ຮັບມອບສິດໄດ້ເຮັດໄປໃນການປະຊຸມ ເວັ້ນແຕ່ກໍລະນີຜູ້ຮັບມອບສິດບໍ່ລົງຄະແນນສຽງຕາມທີ່ຂ້າພະເຈົ້າລະບຸໃນໃບມອບສິດນີ້, ໃຫ້ຖືວ່າຂ້າພະເຈົ້າໄດ້ເຮັດເອງທຸກປະການ.

ຜູ້ມອບສິດ **ຜູ້ຮັບມອບສິດ**

ລົງລາຍເຊັນ..... ລົງລາຍເຊັນ.....

(.....) (.....)

<u>ໝາຍເຫດ</u>

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງທ່ານດຽວເປັນຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງ ລວມທັງບໍ່ສາມາດແບ່ງແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍທ່ານເພື່ອແຍກການລົງຄະແນນສຽງໄດ້; ແລະ
2. ກົດໝາຍວ່າດ້ວຍທະບຽນສານ(ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009 ກຳນົດວ່າ ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍ ແລະ ຜູ້ຕາງໜ້າທາງດ້ານກົດໝາຍ, ດັ່ງນັ້ນ ໃບມອບສິດສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານນຳສຳນັກງານທະບຽນສານ, ກະຊວງຍຸຕິທຳ ໃນນີ້ບໍລິສັດຈະບໍ່ຮັບຜິດຊອບໃດໆ ໃນກໍລະນີທີ່ໃບມອບສິດ ສະບັບນີ້ທີ່ຍື່ນຕໍ່ບໍລິສັດບໍ່ໄດ້ຈົດທະບຽນສານ.
3. ຜູ້ຕາງໜ້າຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອກະສານປະເພດດຽວກັນນີ້ ຂອງຜູ້ຖືຮຸ້ນ,ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ.

ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງ

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ ແລະ ກະກຽມເອກະສານ ຕາມທີ່ກຳນົດດ້ານລຸ່ມນີ້ມາພ້ອມ.

<u>ບໍລິສັດຂໍສະຫງວນສິດໃນການອານຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້</u>

1. ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີເຂົ້າຮ່ວມກອງປະຊຸມ

1.1 ກໍລະນີຜູ້ຖືຮຸ້ນເປັນບຸກຄົນ

1.1.1. ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງ

ໃຫ້ສະແດງເອກະສານທີ່ລັດຖະການອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນໃຫ້ຍື່ນຫຼັກຖານປະກອບພ້ອມ

1.1.2. ກໍລະນີຜູ້ຖືຮຸ້ນມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1)ໃບມອບສິດຕາມແບບຟອມທີ່ຄັດຕິດພ້ອມໜັງສືເຊີນປະຊຸມ ເຊິ່ງໄດ້ມີການປະກອບຂໍ້ມູນຖືກ ຕ້ອງຄົບຖ້ວນ ແລະ ລົງລາຍເຊັນ ພ້ອມຂຽນຊື່ແຈ້ງຂອງຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ;

(2)ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍຕາມຂໍ້ 1.1.1 ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຜູ້ຖືຮຸ້ນທີ່ມອບໝາຍ;

(3)ເອກະສານທີ່ທາງລັດຖະການອອກໃຫ້ຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2 ຜູ້ຖືຮຸ້ນເປັນນິຕິບຸກຄົນ

1.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຄະນະອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງລັດຖະການອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນນິຕິບຸກຄົນ (ຄະນະອຳນວຍການ) ທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

(2) ສຳເນົາໃບອານຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບຂອງບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ ເຊິ່ງມີຂໍ້ມູນສະແດງໃຫ້ເຫັນວ່າຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັ່ນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ)

1.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າ ເຂົ້າຮ່ວມກອງປະຊຸມແທນໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

- ໃບມອບສິດ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ເຊິ່ງໄດ້ມີການປະກອບຂໍ້ມູນຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນ ພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ;
- ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ) ໃບທະບຽນວິສາຫະກິດ, ກົດລະບຽບຂອງບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າຕົວແທນຂອງນິຕິບຸກຄົນມີອຳນາດກະທຳການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ);
- ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ) ຕາມຂໍ້ 1.2.1(1) ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຄະນະອຳນວຍການ);
- ເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກການປ່ຽນຊື່-ນາມສະກຸນໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 1.2.1 ຫຼື ຂໍ້ 1.2.2 ແລ້ວແຕ່ກໍລະນີ

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະ ໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປພາສາດັ່ງກ່າວ

2. ການມອບໝາຍ

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນບໍລິສັດໄດ້ດ້ວຍຕົນເອງສາມາດມອບໝາຍໃຫ້ຜູ້ຕ່າງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ໂດຍດຳເນີນການດັ່ງນີ້:

2.1. ມອບໝາຍໃຫ້ຜູ້ໃດຜູ້ໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ສະມາຊິກອິດສະຫຼະຂອງສະພາບໍລິຫານຂອງບໍລິສັດທ່ານໃດທ່ານໜຶ່ງໂດຍໃຫ້ລະບຸຊື່ພ້ອມກາເຄື່ອງໝາຍ ✓ ລົງໃນຊ່ອງ □ ໜ້າຊື່ຜູ້ຮັບມອບສິດຕາມທີ່ລະບຸໄວ້ໃນໃບມອບສິດໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບສິດໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ;

2.2. ນຳສົ່ງໜັງສືມອບສິດຄືນເລຂາກອງປະຊຸມບໍລິສັດ ກ່ອນວັນທີ 29 ພຶດສະພາ 2020 ຫຼື ກ່ອນເວລາເປີດກອງປະຊຸມຢ່າງໜ້ອຍ 1 ຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານໃຫ້ທັນເວລາເປີດກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕ່າງໜ້າຫຼາຍຄົນເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນໂດຍບໍ່ສາມາດມອບໝາຍພຽງບາງສ່ວນນ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

3. ການລົງທະບຽນ

ບໍລິສັດຈະເລີ່ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກ່ອນເປີດກອງປະຊຸມ 2 ຊົ່ວໂມງ ຫຼື ຕັ້ງແຕ່ເວລາ 13:00 ໂມງ ເປັນຕົ້ນໄປໃນວັນທີ 29 ພຶດສະພາ 2020. ຢູ່ຊັ້ນ 12, ໂຮງແຮມ ຄອນທີເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປ ລາວ ຕາມແຜນທີ່ທີ່ໄດ້ຄັດຕິດມາພ້ອມ

ໃນນີ້, ໃນແຕ່ລະອາລະກອງປະຊຸມກ່ອນເລີ່ມການລົງຄະແນນ, ບໍລິສັດຈະປິດຮັບລົງທະບຽນເປັນການຊົ່ວຄາວ ແລະ ຈະເປີດຮັບລົງທະບຽນອີກເມື່ອການນັບຄະແນນຂອງແຕ່ລະອາລະປະຊຸມສຳເລັດແລ້ວ

4. ການລົງຄະແນນສຽງ ແລະ ການນັບຜົນການລົງຄະແນນສຽງ

4.1. ການລົງຄະແນນສຽງ

(1) ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ ແລະ ຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນຕົນຖືຢູ່ ເທົ່ານັ້ນ

(2) ບໍລິສັດຈະຈັດໃຫ້ມີບັດລົງຄະແນນ (Ballots) ສຳລັບທຸກໆ ອາລະປະຊຸມທີ່ຕ້ອງມີການລົງຄະແນນສຽງໂດຍບໍລິສັດຈະແຈກບັດລົງຄະແນນໃຫ້ຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທຸກຄົນໃນເວລາທີ່ລົງທະບຽນ, **<u>ຍົກເວັ້ນ</u>** ສຳລັບຜູ້ຕາງໜ້າ ເຊິ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສິດຢ່າງຈະແຈ້ງແລ້ວ ບໍລິສັດຈະບໍ່ແຈກບັດລົງຄະແນນໃຫ້ແກ່ຜູ້ຕາງໜ້າດັ່ງກ່າວ, ໃນນີ້ຜູ້ທີ່ມາລົງທະບຽນຫຼັງຈາກເວລາທີ່ກອງປະຊຸມຜູ້ຖືຮຸ້ນໄດ້ເປີດກອງປະຊຸມໄປຕາມລະບຽບອາລະປະຊຸມບາງສ່ວນແລ້ວ, ຈະໄດ້ຮັບບັດລົງຄະແນນສະເພາະອາລະປະຊຸມທີ່ເຫຼືອຢູ່ເທົ່ານັ້ນ.

4.2. ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະອາລະປະຊຸມ

ໃນການລົງຄະແນນສຽງໃນແຕ່ລະອາລະກອງປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທັງໝົດ, ປະທານຈະຖາມກອງປະຊຸມວ່າມີຜູ້ໃດບໍ່ເຫັນດີ ຫຼື ບໍ່ ຜູ້ທີ່ເຫັນດີບໍ່ຕ້ອງກາເຄື່ອງໝາຍໃດໆ ລົງໃນບັດລົງຄະແນນ (Ballots) ສ່ວນຜູ້ທີ່ບໍ່ເຫັນດີ ກັບອາລະປະຊຸມດັ່ງກ່າວໃຫ້ກາເຄື່ອງໝາຍເຄື່ອງໝາຍ ✓ ລົງໃນຊ່ອງ □ ບໍ່ເຫັນດີ ໃນບັດລົງຄະແນນ ພ້ອມທັງລົງລາຍເຊັນໃນບັດລົງຄະແນນ ແລະ ຍົກມືຂຶ້ນເພື່ອສົ່ງມອບໃຫ້ເຈົ້າໜ້າທີ່ຂອງບໍລິສັດນຳໄປກວດນັບ, ຍົກເວັ້ນສຳລັບຜູ້ຕາງໜ້າເຊິ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບມອບສິດຢ່າງຈະແຈ້ງແລ້ວ ບໍລິສັດຈະບັນທຶກຄະແນນສຽງດັ່ງກ່າວຕັ້ງແຕ່ເວລາຜູ້ທີ່ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ.

ໃນນີ້, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງທີ່ປະທານໄດ້ປະກາດໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະອາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມາລວມເປັນຄະແນນສຽງອີກ.

4.3. ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນ

ຜູ້ອຳນວຍການໃຫຍ່ຂອງບໍລິສັດຈະເປັນຜູ້ອະທິບາຍວິທີນັບຄະແນນສຽງໃຫ້ກອງປະຊຸມຮັບຊາບ ກ່ອນເລີ່ມອາລະປະຊຸມໂດຍບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນສຽງໃຫ້ກອງປະຊຸມຮັບຊາບ ກ່ອນສິ້ນສຸດການປະຊຸມໃນແຕ່ລະອາລະ

ໃນນີ້, ບໍລິສັດຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ

ແຜນທີ່ສະຖານທີ່ຈັດປະຊຸມ

